SIDAPHONE et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 303 - 308

# ບັນຫາການສິດສອນຂອງຄູຝຶກຫັດຈາກ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ທີ່ລົງຝຶກຫັດງານໃນໂຮງຮຽນສາມັນພາຍໃນແຂວງຫຼວງພະບາງ ສົກສຶກສາ 2018 - 2019

## ກໍລະນີສຶກສາ: ຄູຝຶກຫັດສາຂາຄູວິທະຍາສາດການເມືອງ

**ສຸລິນທອນ ສີດາພອນ[1], ໄຊພອນ ຄົດໄຊໂຍ, ຢ່າງ ຊ້າງ, ວຽງອານຸສຸກ ອິນທະວົງ, ພັນທະມະນັດ ປະທຸມວັນ ແລະ ແສງເດືອນ ສີວັນຄໍາ**

*ຫ້ອງການບໍລິຫານ-ສັງລວມ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

[1] ***ຕິດຕໍ່ພົວພັນ:*** *ສຸລິນທອນ ສີດາພອນ, ຫ້ອງການບໍລິຫານ-ສັງລວມ ມະຫາວິທະຍາໄລສຸພານຸວົງ, ເບີໂທ: +856 20 5547 1694, ອີເມວ: ssidaphone@su.edu.la*

***ຂໍ້ມູນບົດຄວາມ:***
*ການສົ່ງບົດຄວາມ: 24 ກໍລະກົດ 2021*
*ປັບປຸງສໍາເລັດ: 26 ຕຸລາ 2021*
*ການຕອບຮັບ: 15 ພະຈິກ 2021*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາບັນຫາການສອນຂອງນັກສຶກສາປີສຸດທ້າຍຂອງຄະນະສຶກສາສາດ ທີ່ລົງຝຶກຫັດວິຊາຊີບຄູ ໃນບັນດາໂຮງຮຽນມັດທະຍົມສົມບູນຢູ່ພາຍໃນແຂວງຫຼວງພະບາງ ສົກສຶກສາ 2018-2019 ໂດຍມີຈຸດປະສົງສຶກສາສະພາບບັນຫາການສອນຂອງນັກຝຶກຫັດຕາມ 3 ບາດກ້າວຂອງການສອນຄື ການກະກຽມບົດສອນ, ການສອນຕົວຈິງ ແລະ ການປະເມີນຜົນ. ນອກຈາກນີ້, ຍັງໄດ້ສຶກສາທັດສະນະຄະຕິຂອງນັກຮຽນຊັ້ນມັດທະຍົມ ທີ່ມີຕໍ່ການສອນຂອງຄູຝຶກຫັດນໍາອີກ; ກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ ແມ່ນມີ 3 ກຸ່ມຄື: ຄູຝຶກຫັດຈໍານວນ 27 ຄົນໂດຍເຈາະຈົງເອົາສະເພາະຄູຝຶກຫັດສາຂາຄູວິທະຍາສາດການເມືອງ, ຄູສອນໃນໂຮງຮຽນສາມັນຈໍານວນ 16 ທ່ານ ຈາກ 8 ໂຮງຮຽນ ໂດຍເລືອກແບບເຈາະຈົງສະເພາະຜູ້ທີ່ໄດ້ຮ່ວມໂມງສອນກັບຄູຝຶກຫັດ ແລະ ນັກຮຽນສາມັນຊັ້ນ ມ.5 ແລະ ມ.6 ຈານວນ 80 ຄົນ ໂດຍເລືອກແບບເຈາະຈົງເອົາຈາກບັນດາໂຮງຮຽນທີ່ຄູຝຶກຫັດລົງສອນ; ລວມກຸ່ມຕົວຢ່າງທັງໝົດ 123 ຄົນ. ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາໄດ້ແກ່ແບບສອບຖາມແບບ Rating Scale, ທີ່ສອບຖາມສະພາບບັນຫາການສິດສອນທັງ 3 ບາດກ້າວຄື: ການຂັ້ນກະກຽມການສອນ, ຂັ້ນສອນ ແລະ ຂັ້ນສະຫຼຸບ ເຊິ່ງແບບສອບຖາມນີ້ແມ່ນມີ 3 ແບບຄື: ແບບສອບຖາມສໍາລັບຄູຝຶກຫັດ ຈໍານວນ 30 ຄໍາຖາມ ແລະ ແບບສອບຖາມສາລັບຄູສອນ ຈານວນ 25 ຄໍາຖາມ; ນອກຈາກນີ້ ຍັງມີແບບວັດທັດສະນະຄະຕິຂອງນັກຮຽນຕື່ມອີກ ຈໍານວນ 30 ຄໍາຖາມ. ການວິເຄາະຂໍ້ມູນແມ່ນໄດ້ນໍາເອົາຂໍ້ມູນຈາກແບບສອບຖາມທັງໝົດມາວິເຄາະຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ເພື່ອແປຜົນຊອກຫາສະພາບບັນຫາຕາມສົມມຸດຖານທີ່ວາງໄວ້.

ຜົນການຄົ້ນຄວ້າພົບວ່າ ການສິດສອນຂອງຄູຝຶກຫັດຕາມບັນດາໂຮງຮຽນສາມັນທີ່ແຂວງຫຼວງພະບາງ ໃນສົກສຶກສາ 2018-2019 ແມ່ນພົບບັນຫາໃນລະດັບປານກາງ $\overline{X} = 3.47; S.D = 0.77$ ແລະ ນັກຮຽນສາມັນ ມີທັດສະນະຄະຕິທີ່ດີຫຼາຍ ຕໍ່ກັບການສອນຂອງຄູຝຶກຫັດ ໃນລະດັບຄ່າສະເລ່ຍ $\overline{X} = 4.41; S.D = 0.51$.

ສະຫຼຸບແລ້ວ, ເຖິງວ່າການລົງຝຶກຫັດວິຊາຊີບຄູ ຂອງນັກສຶກສາຄະນະສຶກສາດ ມະຫາວິທະຍາໄລສຸພານຸວົງ ຈະຍັງພົບບັນຫາຫຍຸ້ງຍາກ ແລະ ອຸປະສັກຕ່າງໆ ໂດຍສະເພາະບັນຫາການສິດສອນຂອງຄູຝຶກຫັດ ທີ່ເປັນຄູໃໝ່ບໍ່ທັນມີປະສົບການການສອນກໍ່ຕາມ ແຕ່ໃນພາບລວມແລ້ວແມ່ນໄດ້ຮັບການຕອບຮັບເປັນຢ່າງດີຈາກທາງຊຸມຊົນ ແລະ ທ້ອງຖິ່ນ ໂດຍສະເພາະສະແດງອອກໃນທັດສະນະຄະຕິຂອງນັກຮຽນສາມັນທີ່ມີຕໍ່ຄູຝຶກຫັດໃນລະດັບດີຫຼາຍ

**ຄໍາສັບສໍາຄັນ:** *ການລົງຝຶກຫັດ, ຄູຝຶກຫັດ, ຄູສອນ, ນັກຮຽນສາມັນ, ທັດສະນະຄະຕິ*

SIDAPHONE et al. (2021). Souphanouvong University Journal of Multidisciplinary Research and Development, ISSN 2521-0653. Volume 7. Issue 2. July – December 2021. Page 303 - 308

# The Problem Faced by Students Teacher Trainees During Teaching Practices at Secondary Schools. A Case Study of Political Student Teacher Trainees, Academic Year 2018 - 2019

**Soulinthon SIDAPHONE[1], Saiphone KHOTSAIGNOH, Yang XANG, ViengArnousouk INTHAVONG, Phanthamanath PATHOUMVANH and Sengdeuan SIVANHKHAM**

*Administration Office Souphanouvong University, Lao PDR*

**[1]Corresponding Author:**
*Soulinthone SIDAPHONE, Administration Office Souphanouvong University, Tel: +856 20 5547 1694, E-mail: ssidaphone@su.edu.la*

**Article Info:**
*Submitted: Jul 24, 2021*
*Revised: Oct 26, 2021*
*Accepted: Nov 15, 2021*

**ABSTRACT**

This research was intended to investigation the problem during the instruction in secondary school by the trainee students from Faculty of Education, Souphanouvong University, and Academic year 2018-2020, Case Study: Political Science Trainees. The research aimed to investigate the processes three steps in instruction, including preparation, lecturing, and summarizing, have been conducted by teacher trainees. , the samples of research consist of 27 political science teacher trainees, 16 teacher from the secondary school and 80 students from 8 schools; these sample was select by purposive sampling. The instrument of this research consisted of 3 questionnaires with multiple choice; first questionnaire was adapted for the trainees teacher with total of 30 questions, the second was adapted for the teacher who Supervised the trainees with total of 25 questions; and the third questionnaire was adapted for the student with total of 25 perspective questions; The descriptive statistics were used to analyze the data which included the Mean $(\bar{X})$ and Standard Deviation (S.D) to find the the problems had been encountered during teaching practice.

**The research found that** the instruction problems that were faced by the teacher trainees during the teaching practice in eight secondary schools were medium level by the mean of $\bar{X} = 3.47; S.D = 0.77$ and the students' attitude toward the teacher trainees' instruction was high-level by the mean of $\bar{X} = 4.41; S.D = 0.51$

Although teacher trainees faced many challenges during their teaching practice due to their new experience in teaching, in reality they received very good care from the local people, and the students were also satisfied to a high level with the trainee's instruction.

**Keywords:** *Teaching Practice, teacher trainees, students, attitudes*

## 1. ພາກສະເໜີ

ການລົງຝຶກຫັດງານມີຄວາມຈຳເປັນ ແລະ ສຳຄັນຫຼາຍຕໍ່ກັບການຈັດການຮຽນ - ການສອນກໍ່ຄືການປະຕິບັດຫຼັກສູດຂອງໂຮງຮຽນ ວຽກງານການສິດສອນເປັນບັນຫາທີ່ສຳຄັນເປັນຕົ້ນແມ່ນຂະບວນການດຳເນີນກິດຈະກຳການຮຽນ-ການສອນໄດ້ໃຊ້ຄວາມຮູ້ທາງດ້ານວິຊາຊີບຄູທີ່ຮຽນມາຕະຫຼອດໄລຍະທີ່ຜ່ານມາ ແລ້ວນຳໄປສອນປະຕິບັດຕົວຈິງກັບການຮຽນທີ່ໂຮງຮຽນສາມັນໂດຍຈຸດປະສົງຝຶກຫັດງານໃນວຽກງານການສອນ, ວຽກງານຄູປະຈຳຫ້ອງ, ວຽກງານຊຸມຊົນ ແລະ ການສຶກສາປະຫວັດເດັກຕະຫຼອດກິລິຍາທ່າທີຂອງນັກຮຽນ ເພື່ອສະແດງເຖິງຄວາມເປັນຄູຂອງຕົນເອງອອກມາ ແລະ ໃຫ້ເປັນຄູຢ່າງແທ້ຈິງ, ການຝຶກຫັດງານໝາຍເຖິງການຝຶກທັກສະເບື້ອງຕົ້ນຂອງຄວາມເປັນຄູເພື່ອແນ່ໃສ່ວິທີຝຶກການສອນໃນສາຍຕ່າງໆ ແລະ ການສ້າງຄວາມຊຳນິຊຳນານໃຫ້ແກ່ຕົນເອງເພື່ອປະກອບອາຊີບຄູເປັນຄູທີ່ດີໃນອະນາຄົດ, (ສຸລິນທອນ ສິດາພອນ, 2019)

ໃນນັ້ນຜູ້ທີ່ຈະນຳເອົາການສຶກສາໃຫ້ກ້າວໜ້າໄປຢ່າງມີປະສິດທິພາບສູງນັ້ນກໍ່ແມ່ນຄູ, ຍ້ອນວ່າ ຄູເປັນຜູ້ໃກ້ຊິດຕິດແທດກັບພຶດຕິກຳການຮຽນຂອງນັກຮຽນຫຼາຍກວ່າຄົນອື່ນໆ. ສະນັ້ນການລົງຝຶກຫັດງານຈຶ່ງມີຄວາມຈຳເປັນຕ້ອງໃຫ້ຄູມີຄວາມຮູ້, ມີຄຸນນະທຳຮອບດ້ານ ແລະ ຮູ້ຊອກສະແຫວງຫາສິ່ງແປກໆໃໝ່ໆໃນສັງຄົມ ສະນັ້ນ, ເພິ່ນຈຶ່ງໃຫ້ນາມມະຍົດຂອງຄູວ່າ: "ຄູເປັນແມ່ພິມຂອງຊາດ", "ຄູແມ່ນນັກວິສະວະກອນທີ່ຫຼໍ່ຫຼອມດວງວິນຍານຂອງເດັກ". ດັ່ງນັ້ນ, ການຝຶກຫັດງານຈິງມີຄວາມສາຄັນໃນການພັດທະນາທັກສະວິຊາຄູ,ທັງພັດທະນາອຸດົມການຂອງຄວາມເປັນເປັນຄູໄດ້, ທັງໂອກາດໃຫ້ນັກສຶກສາຝຶກຫັດງານໄດ້ສຳພັດຕົວຈິງກັບໂຮງຮຽນສາມັນ ແລະ ຊຸມຊົນ, ໄດ້ສະແດງອອກຄວາມຮັບຜິດຊອບຕໍ່ການດຳເນີນການຝຶກສອນຂອງຕົນເອງຢ່າງເຕັມສ່ວນ ອີກດ້ານໜຶ່ງ ວຽກງານການລົງຝຶກຫັດງານວິຊາຊີບນັບວ່າເປັນຫົວໃຈສຳຄັນຂອງຄະນະສຶກສາສາດ ເພາະເປັນຂະບວນການຫຼໍ່ຫຼອມຄວາມເປັນຄູທີ່ດີ, ມີຄວາມຮັບຜິດຊອບໃນໜ້າທີ, ມີເຈດຕະຄະຕິທີ່ດີຕໍ່ອາຊີບຄູ ເພື່ອເປັນຄູທີ່ດີໃນອະນາຄົດ. (ໄຊພອນ ຄົດໄຊໂຍ ພ້ອມດ້ວຍຄະນະ, 2019)

ດັ່ງນັ້ນ, ການລົງຝຶກຫັດງານຈຶ່ງເປັນວຽກງານທີ່ສຳຄັນຂອງນັກສຶກສາທີ່ຮຽນຢູ່ຄະນະສຶກສາສາດ, ຄະນະສຶກສາສາດ (ຄສສ) ແມ່ນໜຶ່ງໃນຈຳນວນ 6 ຄະນະວິຊາ ຂອງມະຫາວິທະຍາໄລສຸພານຸວົງ, ມີພາລະກິດຫຼັກຄື: ສ້າງຄົນໃຫ້ມີຄວາມຮູ້ສ້າງຄູໃຫ້ມີຄຸນນະພາບ ມີວິໄນໃສ່ໃຈໃນການພັດທະນາທ້ອງຖິ່ນ, ໂດຍລົງເລິກໃນລະດັບຊັ້ນມັດທະຍົມຕອນປາຍ, ໃນສົກສຶກສາ 2018 -2019 ຄະນະສຶກສາສາດປະກອບມີ 6 ສາຂາວິຊາຄື: ສາຂາວິຊາຄູຄະນິດສາດ, ສາຂາວິຊາຄູພາສາລາວ -ວັນນະຄະດີ, ສາຂາວິຊາຄູພາສາອັງກິດ, ສາຂາວິຊາຄູຟີຊິກສາດ, ສາຂາວິຊາຄູວິທະຍາສາດການເມືອງ ແລະ ສາຂາວິຊາຄູເຄມີສາດ. (ສຳລັບການລົງຝຶກງານໃນສົກສຶກສາ 2018-2019 ນີ້ ມີພຽງແຕ່ 5 ສາຂາວິຊາຄື: ສາຂາວິຊາຄູຄະນິດສາດ, ສາຂາວິຊາຄູພາສາລາວ-ວັນນະຄະດີ, ສາຂາວິຊາຄູພາສາອັງກິດ, ສາຂາວິຊາຄູຟີຊິກສາດ ແລະ ສາຂາວິຊາຄູວິທະຍາສາດການເມືອງ). ໂດຍມຸ່ງໝາຍເນັ້ນການພັດທະນາຄູຕ້ອງໄປຕາມ 3 ລັກສະນະຄື: ລັກສະນະຊາດ, ລັກສະນະມະຫາຊົນ ແລະ ລັກສະນະວິທະຍາສາດ ແລະ 5 ຫຼັກມູນຂອງການສຶກສາຄື: ປັນຍາສຶກສາ, ຄຸນສົມບັດສຶກສາແຮງງານສຶກສາ, ພາລະສຶກສາ ແລະ ສິລະປະສຶກສາ ໂດຍຄູຕ້ອງມີຄວາມຮູ້ໃນ 3 ດ້ານຄື: ຄວາມຮູ້ດ້ານລາຍວິຊາ, ຄວາມຮູ້ດ້ານວິຊາວິຊາຊີບຄູ ແລະ ຄວາມຮູ້ທາງດ້ານບໍລິບົດ. ນອກຈາກນີ້ຕ້ອງສາມາດນຳໃຊ້ໃຫ້ເປັນ ແລະ ກ້າວໄປສູ່ການປະດິດສ້າງ, ເປັນຜູ້ກະຕຸກຊຸກຍູ້ໃຫ້ຜູ້ຮຽນສ້າງອົງຄວາມຮູ້ດ້ວຍຕົນເອງ ແລະ ເປັນນັກຄິດແບບວິພາກວິຈານ. (ກອງປະຊຸມໃຫຍ່ຄັ້ງທີ X ພັກປະຊາຊົນປະຕິວັດລາວ, 2016)

ໂດຍອີງຕາມຫຼັກສູດຂອງຄະນະສຶກສາສາດແລ້ວມີຈຸດມຸ່ງໝາຍເພື່ອສ້າງໃຫ້ນັກສຶກສາມີຈັນຍາບັນ, ຈັນຍາທຳ, ຄຸນນະທຳ, ວິລະຍະ, ອຸດສະຫະ, ຂອງຄວາມເປັນຄູຕ້ອງປະຕິບັດໜ້າທີ່ໃນການສິດສອນໄດ້ເປັນຢ່າງດີ. ສ້າງໃຫ້ນັກສຶກສາເປັນແບບຢ່າງທີ່ດີໃນການປະຕິບັດໜ້າທີ່, ການດຳລົງຊີວິດທີ່ສົດໃສ ແລະ ມີທັກສະນະຄວາມເປັນຜູ້ນຳ ແລະ ສ້າງໃຫ້ນັກສຶກສາກາຍເປັນບຸກຄົນທີ່ສາມາດຮຽນຮູ້ຢ່າງຕໍ່ເນື່ອງ, ສະດຸ້ງໄວຕໍ່ສະພາບການປ່ຽນແປງໃໝ່ຝຶກຝົນຄົ້ນຄິດ ແລະ ຮຽນຮູ້ສິ່ງໃໝ່ຢູ່ເລື້ອຍໆ ໂດຍສະເພາະແມ່ນທາງດ້ານການເມືອງ, ວິທະຍາສາດເຕັກໂນໂລຊີ ຂໍ້ມູນຂ່າວສານ. ເຊິ່ງນັກສຶກສາປີສຸດທ້າຍ ກ່ອນທີ່ຈະສຳເລັດການສຶກສາໄປປະຕິບັດໜ້າທີ່ການສິດສອນຕາມໂຮງຮຽນມັດທະຍົມແຫ່ງຕ່າງໆນັກສຶກສາທຸກຄົນຕ້ອງໄດ້ຜ່ານການລົງຝຶກຫັດງານວິຊາຊີບຄູຈຶ່ງຖືວ່າສຳເລັດຫຼັກສູດການສ້າງຄູ.

ແຕ່ເຖິງຢ່າງໃດກໍ່ຕາມ ຕະຫຼອດໄລຍະເວລາທີ່ຜ່ານມາ ທາງຄະນະສຶກສາສາດຂອງພວກເຮົາໄດ້ມີການສົ່ງນັກສຶກສາລົງໄປຝຶກຫັດງານຢູ່ຫຼາຍທ້ອງຖິ່ນ ທັງພາຍໃນແຂວງ ແລະ ຕ່າງແຂວງ ເຊິ່ງໜ້າວຽກຫຼັກຂອງຄູຝຶກຫັດກໍ່ຄື ການຝຶກຫັດສອນ ເຊິ່ງເນື່ອງດ້ວຍການເປັນຄູໃໝ່, ຂາດປະສົບການ ແລະ ຄວາມໝັ້ນໃຈ ລວມເຖິງການເຮັດວຽກໃນສະພາບແວດລ້ອມທີ່ມີຄວາມກົດດັນ ເຮັດໃຫ້ນັກຝຶກຫັດຈຳ

ນວນໜຶ່ງ ເກັບກ່ຽວຜົນການຝຶກຫັດສອນມາໄດ້ບໍ່ຄ່ອຍດີເທົ່າທີ່ຄວນ ສະແດງອອກໃນຜົນການປະເມີນການສອນໂດຍຄູເກົ່າ ແມ່ນຍັງມີຄ່າສະເລ່ຍທີ່ຂ້ອນຂ້າງຕໍ່າ (ຄະນະສຶກສາສາດ, 2018)

ດ້ວຍສາເຫດທີ່ກ່າວມາຂ້າງເທິງ ທາງທີມງານຄົ້ນຄ້ວາຂອງພວກເຮົາໄດ້ມີຄວາມສົນໃຈ ສຶກສາສະພາບການສິດສອນຂອງຄູຝຶກຫັດ ທີ່ລົງຝຶກຫັດວິຊາຊີບ ໂດຍໄດ້ເລືອກເອົາສະຖານທີ່ເປັນບັນດາໂຮງຮຽນທີ່ມີນັກສຶກສາລົງຝຶກຫັດງານພາຍໃນແຂວງຫຼວງພະບາງ ສົກສຶກສາ 2018-2019 ເພື່ອສຶກສາຫາວິທີການດຳເດີນປັບປຸງແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນໃນໄລຍະຝຶກຫັດງານ ແລະ ເຮັດໃຫ້ການຝຶກຫັດງານດຳເນີນໄປດ້ວຍປະສິດທິພາບສູງຕໍ່ໄປ.

## 2. ອຸປະກອນ ແລະ ວິທີການ

### 2.1 ກຸ່ມຕົວຢ່າງ

ເນື່ອງຈາກການສຶກສາຄັ້ງນີ້ ເປັນການສຶກສາໃນວົງກວ້າງ ທີ່ມີຈຳນວນປະຊາກອນຢູ່ຫຼາຍສະຖານທີ່ແຕກຕ່າງໆກັນ ທາງທີມງານຄົ້ນຄວ້າຂອງພວກເຮົາ ໄດ້ເລືອກໃຊ້ວິທີການເຈາະຈົງເອົາກຸ່ມເປົ້າໝາຍເພື່ອມາເປັນກຸ່ມຕົວຢ່າງໂດຍອີງໃສເກນຄວາມສະດວກເປັນຫຼັກ (ສານັກງານສະຖິຕິແຫ່ງຊາດ, 2014) ໂດຍສາມາດກຳນົດເອົາກຸ່ມຕົວຢ່າງດັ່ງຕໍ່ໄປນີ້:

- ຄູຝຶກຫັດຈຳນວນ 27 ຄົນຈາກສາຂາຄູວິທະຍາສາດການເມືອງ
- ຄູສອນໃນໂຮງຮຽນສາມັນຈຳນວນ 16 ທ່ານ ໂດຍເລືອກແບບເຈາະຈົງສະເພາະຜູ້ທີ່ໄດ້ຮ່ວມໂມງສອນກັບຄູຝຶກຫັດ.
- ນັກຮຽນສາມັນຊັ້ນ ມ.5 ແລະ ມ.6 ຈານວນ 80 ຄົນ ໂດຍເລືອກແບບເຈາະຈົງເອົາຈາກບັນດາໂຮງຮຽນທີ່ຄູຝຶກຫັດລົງສອນ 8 ໂຮງຮຽນ, ໂຮງຮຽນລະ 10 ຄົນ; ລວມກຸ່ມຕົວຢ່າງທັງໝົດ 123 ຄົນ ໂດຍແຍກເປັນ ຄູຝຶກຫັດ 27 ຄົນ, ຄູສອນ 16 ຄົນ ແລະ ນັກຮຽນ 80 ຄົນ.

### 2.2 ເຄື່ອງມືໃນການຄົ້ນຄວ້າ

ເຄື່ອງມືທີ່ໃຊ້ເຂົ້າໃນການສຶກສາໄດ້ແກ່ແບບສອບຖາມແບບ Rating Scale, ທີ່ສອບຖາມສະພາບບັນຫາການສິດສອນທັງ 3 ບາດກ້າວຄື: ຂັ້ນກະກຽມສອນ, ຂັ້ນສອນ ແລະ ຂັ້ນສະຫຼຸບບົດຮຽນ. ເຊິ່ງແບບສອບຖາມນີ້ແມ່ນມີ 2 ແບບຄື: ແບບສອບຖາມສຳລັບຄູຝຶກຫັດ ຈຳນວນ 30 ຂໍ້ ແລະ ແບບສອບຖາມສຳລັບຄູສອນ ຈຳນວນ 25 ຂໍ້; ນອກຈາກນີ້ຍັງມີແບບວັດທັດສະນະຄະຕິຂອງນັກຮຽນຕື່ມອີກ ຈຳນວນ 30 ຂໍ້. (ປະສາດ ເນືອງສະເຫຼີມ, 2013) ໂດຍບັນດາແບບສອບຖາມເຫຼົ່ານີ້ ແມ່ນໄດ້ມີການກວດສອບຄຸນນະພາບ ໂດຍຜູ້ຊ່ຽວຊານພາຍໃນທີມງານເອງ

### 2.3 ວິທີການເກັບກຳຂໍ້ມູນ

ການເກັບກຳຂໍ້ມູນ ແມ່ນໄດ້ດຳເນີນໃນໄລຍະທີ່ນັກສຶກສາລົງຝຶກຫັດງານ ເຊິ່ງເປັນການເກັບຂໍ້ມູນກັບສະຖານທີ່ ແລະ ກຸ່ມຕົວຢ່າງຈິງ. ວິທີການເກັບຂໍ້ມູນຂອງພວກເຮົາແມ່ນໄດ້ມີດຳເນີນການໄປພ້ອມກັບການລົງຕິດຕາມກວດກາຂະບວນຝຶກຫັດງານ ຕາມປະຕິທິນດຳເນີນງານຂອງທາງຄະນະສຶກສາສາດຢູ່ແລ້ວ ເຊິ່ງທີມງານຂອງພວກເຮົາແມ່ນໄດ້ມີການແບ່ງໜ້າທີ່, ພື້ນທີ່ຮັບຜິດຊອບໃຫ້ສະມາຊິກໃນທີມຢ່າງລະອຽດຊັດເຈນ

### 2.4 ວິທີການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນແມ່ນໄດ້ນຳໃຊ້ຊອບແວຣ໌ Microsoft Excel ໂດຍດຳເນີນການດັ່ງຕໍ່ໄປນີ້:

❶ ວິເຄາະຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ເພື່ອແປຜົນຊອກຫາລະດັບ ຂອງສະພາບບັນຫາການສິດສອນແຕ່ລະດ້ານ ທີ່ຄູຝຶກຫັດໄດ້ພົບພໍ້ ແລະ ປະເຊີນກັບ ໃນໄລຍະລົງຝຶກຫັດງານຂອງຕົນເອງ

❷ ວິເຄາະຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ເພື່ອແປຜົນຊອກຫາລະດັບ ຂອງສະພາບປະຕິບັດວຽກງານສິດສອນຂອງຄູຝຶກຫັດ ຕາມການປະເມີນຂອງຄູສອນໃນໂຮງຮຽນສາມັນ ທີ່ນັກສຶກສາລົງຝຶກຫັດງານ

❸ ວິເຄາະຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານ ເພື່ອແປຜົນຊອກຫາລະດັບທັດສະນະຄະຕິ ຫຼື ຄວາມຄິດເຫັນ ຂອງນັກຮຽນສາມັນທີ່ມີຕໍ່ການສອນຂອງຄູຝຶກຫັດ

## 3. ຜົນໄດ້ຮັບ

ຈາກການວິເຄາະຂໍ້ມູນແບບສອບຖາມຂອງນັກສຶກສາ ສາມາດວິເຄາະຜົນໄດ້ດັ່ງນີ້:

❶ ຜົນວິເຄາະຈາກແບບສອບຖາມຄູຝຶກຫັດ ພົບວ່າ ການສິດສອນແມ່ນພົບບັນຫາໃນລະດັບປານກາງ ໃນລະດັບ $\bar{X}$ = 3.25; S.D = 0.95 ເຊິ່ງໃນນີ້ ຂັ້ນຕອນທີ່ພົບບັນຫາຫຼາຍກ່ວາໝູ່ແມ່ນ ຂັ້ນຕອນສະຫຼຸບບົດຮຽນ ໂດຍພົບບັນຫາໃນລະດັບປານກາງ ທີ່ລະດັບ $\bar{X}$ = 3.33; S.D = 0.99 ດັ່ງຂໍ້ມູນໃນຕາຕະລາງ 1.

❷ ຜົນການວິເຄາະຈາກແບບສອບຖາມຄູສອນຈາກ 8 ໂຮງຮຽນສາມັນທີ່ມີຄູຝຶກຫັດງານ ພົບວ່າ ການປະຕິບັດການສິດສອນຂອງຄູຝຶກຫັດນັ້ນ ແມ່ນມີພົບບັນຫາຫຼາຍ ໃນລະດັບ $\bar{X}$ = 3.69; S.D = 0.55, ໂດຍຂັ້ນຕອນທີ່ພົບບັນຫາຫຼາຍທີ່ສຸດແມ່ນ ຂັ້ນການສອນຕົວຈິງ ເຊິ່ງພົບບັນຫາໃນລະດັບຄ່າສະເລ່ຍ $\bar{X}$ = 3.75; S.D = 0.52; ດັ່ງຂໍ້ມູນໃນຕາຕະລາງ 2, ເມື່ອນຳເອົາຜົນການວິເຄາະຈາກຄູຝຶກຫັດ ແລະ ຄູສອນ ມາສັງລວມກັນແລ້ວຈະພົບວ່າ ການສິດສອນຂອງຄູຝຶກຫັດນັ້ນແມ່ນພົບບັນຫາໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ $\bar{X}$ = 3.47; S.D = 0.77 ດັ່ງຂໍ້ມູນໃນຕາຕະລາງ 3.

❸ ຜົນການວິເຄາະແບບວັດທັດສະນະຄະຕິຂອງນັກຮຽນສາມັນທີ່ມີຕໍ່ການສອນຂອງຄູຝຶກຫັດ ພົບວ່າ ນັກຮຽນມີທັດສະນະຄະຕິທີ່ດີຫຼາຍຕໍ່ກັບການສອນຂອງຄູຝຶກຫັດໃນລະດັບຄ່າສະເລ່ຍ $\bar{X}$ = 4.41; S.D= 0.51.

## 4. ວິພາກຜົນ

ສິ່ງນັກສຶກສາລົງຝຶກຫັດງານຂອງ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ແມ່ນຍັງພົບບັນຫາ ແລະ ຂໍ້ຫຍຸ້ງຍາກພໍສົມຄວນ ເຊິ່ງສະແດງອອກໃນຄ່າສະເລ່ຍຈາກແບບສອບຖາມ, ເຖິງແມ່ນວ່າການສະແດງອອກຂອງບັນຫາຈະມີລະດັບແຕກຕ່າງກັນລະຫວ່າງຄູຝຶກຫັດເອງ ແລະ ຄູສອນ ໂດຍໃນຂໍ້ມູນຕົວຈິງນັ້ນພົບວ່າ ລະດັບບັນຫາທີ່ຄູຝຶກຫັດເອງພົບນັ້ນແມ່ນ ມີຄ່າສະເລ່ຍ $\bar{X}$ = 3.25; S.D = 0.95 ເທົ່ານັ້ນ ໃນຂະນະດຽວກັນດ້ານຄູສອນພັດເບິ່ງເຫັນບັນຫາຂອງຄູຝຶກຫັດໃນລະດັບທີ່ສູງກ່ວາຫຼາຍ ສະແດງອອ ໃນຄ່າສະເລ່ຍ $\bar{X}$ = 3.75; S.D = 0.52 ບັນດາປາກົດການທີ່ກ່າວມານີ້ ແມ່ນສືບເນື່ອງມາຈາກ ສະພາບຕົວຈິງຂອງການລົງຝຶກຫັດງານຂອງນັກສຶກສາ ເພື່ອໄປເປັນຄູສອນໃນໂຮງຮຽນສາມັນ ແມ່ນຖືວ່າເປັນສິ່ງໃໝ່ທີ່ສຸດສຳລັບນັກສຶກສາຄູ, ເຂົາເຈົ້າຍັງບໍ່ທັນມີປະສົບການການເປັນຄູສອນ ແລະ ຍັງຂາດຄວາມເຂົ້າໃຈທີ່ເລິກເຊິ່ງຕໍ່ກັບເນື້ອໃນບົດຮຽນທີ່ຈະສອນ ຕະຫຼອດຮອດຈົນເຖິງຫຼັກຄວາມຮູ້ທາງດ້ານວິຊາສຶກສາສາດ, ປະກອບກັບການລົງຝຶກຫັດງານນັ້ນເປັນການລົງໃນພື້ນທີ່ ທີ່ບໍ່ແມ່ນທ້ອງຖິ່ນພູມລຳເນົາຂອງຕົນເອງ, ເປັນການພັກເຊົາກິນຢູ່ກັບປະຊາຊົນ ອັນເຮັດໃຫ້ຄູຝຶກຫັດບາງຄົນ ບໍ່ໄດ້ຢູ່ໃນສະພາບແວດລ້ອມທີ່ເອື້ອອຳນວຍຕໍ່ການກະກຽມຝຶກສອນໄດ້ ເຖິງແມ່ນວ່າເຂົາເຈົ້າຈະທຸ້ມເທທຸກຄວາມສາມາດ ທັງນີ້ການທີ່ມີສະພາບແວດລ້ອມທີ່ເອື້ອອຳນວຍນັ້ນ ກໍ່ເປັນອີກປັດໄຈໜຶ່ງທີ່ຊ່ວຍຍູ້ໜູນການຈັດການຮຽນ-ການສອນໄດ້. (ອາພອນ ໃຈທ່ຽງ, 2007) ແຕ່ເມື່ອພິຈາລະນາຈາກການປະເມີນໂດຍຄູສອນແລ້ວເຫັນວ່າການສອນຂອງຄູຝຶກຫັດແມ່ນຍັງພົບບັນຫາໃນລະດັບຫຼາຍໃນຂະນະທີ່ຄູຝຶກຫັດເອງກັບເຫັນບັນຫາຂອງຕົນເອງໃນລະດັບປານກາງເທົ່ານັ້ນ. ປາກົດການທີ່ກ່າວມາໄດ້ສ່ອງແສງໃຫ້ພວກເຮົາຮັບຮູ້ເຖິງບັນຫາຂອງຄູຝຶກຫັດ ຜູ້ທີ່ກຳລັງຈະເປັນທີ່ເປັນຜົນຜະລິດຂອງຄະນະສຶກສາສາດ ທີ່ພວກເຮົາຕ້ອງໄດ້ມີການທົບທວນຄືນເຖິງຂະບວນການສ້າງຄູຂອງພວກເຮົາຕື່ມອີກ (ຄະນະສຶກສາສາດ, 2018). ນອກຈາກນີ້, ຂໍ້ມູນທັດສະນະຄະຕິຂອງນັກຮຽນສາມັນທີ່ມີຕໍ່ການສອນຂອງຄູຝຶກຫັດນັ້ນ ແມ່ນຢູ່ໃນລະດັບດີຫຼາຍ ເຊິ່ງຂໍ້ມູນນີ້ບໍ່ໄດ້ເປັນເລື່ອງໃໝ່ ແລະ ແປກໃຈ ເນື່ອງຈາກວ່າການລົງຝຶກຫັດສອນຂອງຄູຝຶກຫັດນັ້ນ ໄດ້ມີກິດຈະກຳວຽກງານນອກຫຼັກສູດຫຼາຍກິດຈະກຳທີ່ຕ້ອງມີການໃກ້ສິດຕິດແທດກັບນັກຮຽນ ເຊິ່ງຄວາມສຳພັນລະຫວ່າງຄູຝຶກຫັດກັບນັກຮຽນທີ່ກ່າວມາ ອາດຈະເປັນທີ່ມາຂອງຂໍ້ມູນຄ່າສະເລ່ຍລະດັບທັດສະນະຄະຕິທີ່ສູງຫຼາຍ ສະແດງເຖິງນັກຮຽນມີຄວາມເຫັນດີເຫັນງາມກັບການສິດສອນຂອງຄູຝຶກຫັດໃນລະດັບດີຫຼາຍ ເປັນການຢັ້ງຢືນເຖິງບະດັບຄວາມສຳພັນຕໍ່ກັບທັດສະ

ນະຄະຕິຂອງເຂົາເຈົ້າ (ຈຸທາຣັດ ເອື້ອອານວຍ, 2006)

## 5. ສະຫຼຸບຜົນ

ການສິດສອນຂອງຄູຝຶກຫັດໃນໂຮງຮຽນສາມັນແມ່ນຍັງພົບບັນຫາທີ່ມີຄວາມແຕກຕ່າງກັນ ຈາກການປະເມີນຂອງຄູຝຶກຫັດເອງທີ່ລະບຸບັນຫາທີ່ຕົນເອງພົບໃນລະດັບປານກາງ ໃນຂະນະທີ່ຜົນການປະເມີນຈາກຄູສອນເດີມໃນໂຮງຮຽນທີ່ເຂົາເຈົ້າລົງຝຶກສອນນັ້ນ ລະບຸວ່າການສອນຂອງຄູຝຶກຫັດ ແມ່ນຍັງພົບບັນຫາໃນລະດັບສູງຫຼາຍ, ແຕ່ເມື່ອນຳເອົາທັດສະນະຂອງທັງ 2 ກຸ່ມຕົວຢ່າງມາປະເມີນແລ້ວ ເຫັນວ່າການສິດສອນຂອງຄູຝຶກຫັດ ແມ່ນພົບບັນຫາໃນລະດັບປານກາງ.

ນັກຮຽນສາມັນຈາກ 8 ໂຮງຮຽນທີ່ຮັບຄູຝຶກຫັດງານແມ່ນໃຫ້ການຍອມຮັບ ແລະ ມີທັດສະນະຄະຕິທີ່ດີຫຼາຍ ຕໍ່ກັບການສິດສອນຂອງຄູຝຶກຫັດ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ກອງປະຊຸມໃຫຍ່ຄັ້ງທີ X ພັກປະຊາຊົນ ປະຕິວັດລາວ. (2016). ວິໄສທັດ ປີ 2030. ນະຄອນຫຼວງວຽງຈັນ: ຄະນະໂຄສະນາອົບຮົມສູນກາງພັກ.

ຄະນະສຶກສາສາດ. (2018). *ບົດສະຫຼຸບການລົງຝຶກຫັດວິຊາຊີບ.* ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ຈຸທາຣັດ ເອື້ອອຳນວຍ. (2006). *ຈິດຕະວິທະຍາສັງຄົມ* (ພິມຄັ້ງທີ 1). ບາງກອກ: ສຳນັກພິມຈຸລາລົງກອນມະຫາວິທະຍາໄລ.

ສຸລິນທອນ ສີດາພອນ. (2019). *ຄູ່ມືການລົງຝຶກຫັດວິຊາຊີບຄູ.* ຫຼວງພະບາງ: ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ສຳນັກງານສະຖິຕິແຫ່ງຊາດ. (2014). ການເທັກນິກການສຸ່ມກຸ່ມຕົວຢ່າງ ແລະ ການປະມານຄ່າ. ບາງກອກ: ສຳນັກງານສະຖິຕິແຫ່ງຊາດໄທ.

ທອງທ່ຽນ ອັດທະນະວົງ. (2015). *ວິທີຄົ້ນຄ້ວາທາງການສຶກສາ.* ຫຼວງພະບາງ: ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ.

ທິດສະນາ ແຂມມະນີ. (ພສ 2555). *ສາດການສອນ* (ພິມຄັ້ງທີ 3). ບາງກອກ: ສູນໜັງສືຈຸລາ.

ປະສາດ ເນືອງສະເຫຼີມ. (2013). *ການວິໄຈທາງການສຶກສາ* (ພິມຄັ້ງທີ 2). ບາງກອກ: ບໍລິສັດວີປິນ 1771 ຈຳກັດ.

ພົນທະມະນັດ ປະທຸມວັນ. (2015). *ສຶກສາສາດ* (Vol. 1). (ປຶ້ມຕຳລາຮຽນ) ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.

ອາພອນ ໃຈທ່ຽງ. (2007). *ຫຼັກການສອນ* (ພິມຄັ້ງທີ 2). ບາງກອກ: ສຳນັກພິມໂອດຽນສະໂຕຣ໌.

ໄຊພອນ ຄິດໄຊໂຍ . (2019). *ວິທີສອນວິທະຍາສາດການເມືອງ* (ພິມຄັ້ງທີ 1). (ປຶ້ມຕຳລາຮຽນ) ຫຼວງພະບາງ: ມະຫາວິທະຍາໄລສຸພານຸວົງ.


**ຕາຕະລາງ 1:** ສະແດງຂໍ້ມູນສະພາບບັນຫາການສິດສອນຂອງຄູຝຶກຫັດ

| **ລຳດັບ** | **ເນື້ອໃນ** | $\bar{X}$ | S.D | **ລະດັບບັນຫາ** |
|---|---|---|---|---|
| I | ຂັ້ນກະກຽມກ່ອນສອນ | 3.25 | 0.99 | ປານກາງ |
| II | ຂັ້ນການສອນ | 3.19 | 0.89 | ປານກາງ |
| III | ຂັ້ນສະຫຼຸບ | 3.33 | 0.99 | ປານກາງ |

| | | | |
|---|---|---|---|
| **ລວມ** | **3.25** | **0.95** | **ປານກາງ** |

**ຕາຕະລາງ 2:** ສະແດງຂໍ້ມູນສະພາບບັນຫາການສິດສອນຂອງຄູຝຶກຫັດ ປະເມີນໂດຍຄູສອນ

| **ລຳດັບ** | **ເນື້ອໃນ** | $\bar{X}$ | S.D | **ລະດັບບັນຫາ** |
|---|---|---|---|---|
| I | ຂັ້ນກະກຽມກ່ອນສອນ | 3.66 | 0.59 | ຫຼາຍ |
| II | ຂັ້ນການສອນ | 3.75 | 0.52 | ຫຼາຍ |
| III | ຂັ້ນສະຫຼຸບ | 3.66 | 0.55 | ຫຼາຍ |
| **ລວມ** | | **3.69** | **0.55** | **ຫຼາຍ** |

**ຕາຕະລາງ 3:** ສະແດງຂໍ້ມູນສະພາບລວມບັນຫາການສິດສອນທີ່ຄູຝຶກຫັດພົບ

| **ລຳດັບ** | **ເນື້ອໃນ** | $\bar{X}$ | S.D | **ລະດັບບັນຫາ** |
|---|---|---|---|---|
| 1 | ປະເມີນຈາກແບບສອບຖາມຄູຝຶກຫັດ | 3.25 | 0.95 | ປານກາງ |
| 2 | ປະເມີນຈາກຄູສອນ | 3.69 | 0.55 | ຫຼາຍ |
| **ລວມ** | | **3.47** | **0.77** | **ປານກາງ** |

**ຕາຕະລາງ 4:** ສະແດງຂໍ້ມູນທັດສະນະຄະຕິຂອງນັກສຶກສາຕໍ່ກັບການສອນຂອງຄູຝຶກຫັດ

| **ລຳດັບ** | **ເນື້ອໃນ** | $\bar{X}$ | S.D | **ລະດັບທັດສະຄະຕິ** |
|---|---|---|---|---|
| 1 | ຂັ້ນກະກຽມເຂົ້າສູ່ບົດຮຽນ | 4.42 | 0.54 | ດີຫຼາຍ |
| 2 | ຂັ້ນການສອນ | 4.28 | 0.69 | ດີຫຼາຍ |
| 3 | ຂັ້ນສະຫຼຸບ | 4.53 | 0.63 | ດີທີ່ສຸດ |
| **ລວມ** | | **4.41** | **0.51** | **ດີຫຼາຍ** |